ສງງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ມິຖຸນາ 2026

ປີທີ 15

ສະບັບທີ 1069


## ທ່ານ ໄຊສົມພອນ ພົມວິຫານ ພົບປະຜູ້ມີສິດເລືອກຕັ້ງກຳລັງ ປກສ




(ສພຊ) - ວັນທີ 12 ມິຖຸນາ 2026, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ(ນວ) ນຳໂດຍທ່ານ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຕິດຕາມ ໄດ້ພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ທີ່ສະໂມສອນກະຊວງປ້ອງກັນຄວາມສະຫງົບ (ສະໜາມມ້າ), ໃຫ້ການຕ້ອນຮັບໂດຍທ່ານ ພົທ. ວັນທອງ ກອງມະນີ ຄະນະເລຂາທິການສູນກາງພັກ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ (ປກສ), ມີຮອງລັດຖະມົນຕີ, ບັນດາຫົວໜ້າ-ຮອງຫົວໜ້າກົມໃຫຍ່, ຫ້ອງວ່າການ, ກົມ, ກອງບັນຊາການ, ວິທະຍາຄານ, ກອງ

ອ່ານຕໍ່ໜ້າ 7



ແນວຄິດປະທານ

ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ການກວດກາແມ່ນສ່ວນປະກອບອັນສຳຄັນຂອງການນຳພາ ບໍ່ມີການກວດກາກໍບໍ່ມີການນຳພາ, ການນຳພາຈະມີປະສິດທິພາບ ຫຼື ບໍ່ນັ້ນ ສ່ວນໜຶ່ງແມ່ນຂຶ້ນກັບການກວດກາ. ສະນັ້ນ, ການກວດກາ ຕ້ອງສັກສິດ, ເຫັນຜົນຕົວຈິງ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 517)

ອ່ານຕໍ່ສະບັບໜ້າ

## ປະທານສະພາແຫ່ງຊາດ ເຄື່ອນໄຫວວຽກງານຢູ່ເມືອງສີໂຄດຕະບອງ



ອ່ານຕໍ່ໜ້າ 8

## ພິທີມອບ-ຮັບໜ້າທີ່ຂອງບັນດາກົມທີ່ຂຶ້ນກັບຫ້ອງວ່າການສະພາແຫ່ງຊາດ

(ສພຊ)-ພິທີມອບ-ຮັບໜ້າທີ່ລະຫວ່າງຫົວໜ້າກົມຜູ້ເກົ່າ ແລະ ຫົວໜ້າກົມ, ຮັກສາການຫົວໜ້າກົມ ຜູ້ໃໝ່ ຂອງບັນດາກົມທີ່ຂຶ້ນກັບຫ້ອງວ່າການສະພາແຫ່ງຊາດ ໄດ້ຈັດຂຶ້ນໃນຕອນບ່າຍຂອງວັນທີ 8 ມິຖຸນາ 2026 ທີ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິ

ອ່ານຕໍ່ໜ້າ 5



## ທ່ານ ນາງ ສູນທອນ ໄຊຍະຈັກ ຕ້ອນຮັບການເຂົ້າຢ້ຽມອຳລາຂອງເອກອັກຄະລັດຖະທູດ ສ.ເກົາຫຼີ



ອ່ານຕໍ່ໜ້າ 8

## ຮອງປະທານສະພາແຫ່ງຊາດ ເຄື່ອນໄຫວວຽກງານຢູ່ສາລະວັນ



(ສພຊ) - ວັນທີ 11-12 ມິຖຸນານີ້, ທ່ານ ວິໄລວົງ ບຸດດາຄຳ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນພ້ອມດ້ວຍຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 14 ສົມທົບກັບຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ສາລະວັນ ຊຸດທີ V ຢູ່ຕາແສງວາປີ, ເທດສະບານເມືອງວາປີ, ເທດສະບານແຂວງ, ຈຸດສຸມໜອງແກ ແລະ ເທດສະບານເມືອງເລົ່າງາມ ເຊິ່ງໄດ້ຮັບການຕ້ອນຮັບຈາກຄະນະພັກ-ຄະນະນຳຂັ້ນ

ອ່ານຕໍ່ໜ້າ 5

## ປະທານກຳມາທິການການຕ່າງປະເທດ ຮັບການເຂົ້າຢ້ຽມຂຳນັບຂອງເອກອັກຄະລັດຖະທູດສິງກະໂປ



(ສພຊ) - ວັນທີ 10 ມິຖຸນາ 2026, ທ່ານ ໂພໄຊ ໄຊຄຳພິທູນ ປະທານກຳມາທິການການຕ່າງປະເທດ ໄດ້ຕ້ອນຮັບທ່ານ ອົງ ສິວ ເກ (Ong Siew Gay) ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງສາທາລະນະລັດສິງກະໂປ ປະຈຳ ສປປລາວ ເພື່ອພົບປະ ແລະ ແລກປ່ຽນຄວາມເຫັນກ່ຽວກັບການພົວພັນຮ່ວມມືລະຫວ່າງ

ອ່ານຕໍ່ໜ້າ 2

# ປະທານ ສພຂ ແລະ ຮອງປະທານ ກຕທ ພົບປະ ຜູ້ມີສິດເລືອກຕັ້ງຢູ່ 3 ເມືອງແຂວງສາລະວັນ




(ສພຊ) - ລະຫວ່າງວັນທີ 9-14 ມິຖຸນາ 2026, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈໍາເຂດເລືອກຕັ້ງທີ 14 ນໍາໂດຍທ່ານ ດາວວົງ ພອນແກ້ວ ກໍາມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງສາລະວັນ ແລະ ທ່ານ ເພັດລາ ທັນທະວົງສາ ຮອງປະທານກໍາມາທິການການຕ່າງປະເທດ (ກຕທ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ສາລະວັນ ປະຈໍາເຂດເລືອກຕັ້ງເມືອງ ພ້ອມດ້ວຍຄະນະ ໄດ້ສໍາເລັດການລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ໂຄສະນາເຜີຍແຜ່ຜົນສໍາເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ສາລະວັນ ຊຸດທີ V ຢູ່ 3 ເມືອງ ຄື: ສາລະວັນ, ລະຄອນເພັງ ແລະ ຄົງເຊໂດນ ໂດຍມີຄະນະພັກແຂວງ-ເມືອງ, ອໍານາດການປົກຄອງເມືອງ, ຕາແສງ, ບ້ານ ແລະ ພໍ່ແມ່ປະຊາຊົນ ເຂົ້າຮ່ວມ.

ໃນການລົງເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງການລາຍງານສະພາບລວມກ່ຽວກັບຜົນສໍາເລັດຂອງການພັດທະນາເສດຖະກິດ-ສັງຄົມ ຈາກຄະນະກໍາມະການປົກຄອງເມືອງ, ຜົນສໍາເລັດຂອງການພັດທະນາເສດຖະກິດ-ສັງຄົມຂອງຕາແສງບຶງໄຊ, ບ້ານແບ່ງດ່ານ ແລະ ບ້ານຄໍາທອງ ຂອງທັງ 3 ເມືອງດັ່ງກ່າວ. ຈາກນັ້ນ, ສສຊ ແລະ ສສຂ ໄດ້ເຜີຍແຜ່ຜົນສໍາເລັດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສພຊຊຸດທີ X ແລະ ສພຂ ສາລະວັນ ຊຸດທີ V ໂດຍຫຍໍ້; ນອກຈາກນີ້, ຍັງໄດ້ເຜີຍແຜ່ບາງມາດຕາຂອງລັດຖະທໍາມະນູນແລະກົດໝາຍທີ່ສໍາຄັນຈໍານວນໜຶ່ງເຊັ່ນ: ສິດ ແລະ ພັນທະຂອງພົນລະເມືອງລາວ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ, ກົດໝາຍວ່າດ້ວຍສໍານັກງານຜູ້ຕາງໜ້າແຫ່ງ ສປປລາວ ຢູ່ຕ່າງປະເທດ, ກົດໝາຍວ່າດ້ວຍຊັ້ນນັກການທູດ, ກົດໝາຍວ່າດ້ວຍຊາຍແດນແຫ່ງຊາດ, ກົດໝາຍວ່າດ້ວຍໜັງສືຜ່ານແດນ ພ້ອມທັງເຜີຍແຜ່ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຂອງແຂວງ ໄລຍະ 5 ປີ (2026-2030) ເພື່ອໃຫ້ບັນດາພະນັກງານຫຼັກແຫຼ່ງ ແລະ ພໍ່ແມ່ປະຊາຊົນ ໄດ້ຮັບຮູ້, ເຂົ້າໃຈ ແລະ ຮ່ວມກັນເປັນເຈົ້າການປະກອບສ່ວນໃນການຈັດຕັ້ງປະຕິບັດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ. ພ້ອມດຽວກັນນັ້ນ, ກໍໄດ້ປະຕິບັດໜ້າທີ່ການເປັນຕົວແທນຂອງປະຊາຊົນບັນດາເຜົ່າ ໃນການຮັບຟັງ ແລະ ເກັບກໍາເອົາຄໍາຄິດຄໍາເຫັນ, ຂໍ້ສະເໜີ ແລະ ບັນຫາຂັດຂ້ອງໝອງໃຈຂອງປະຊາຊົນ ເພື່ອຊີ້ແຈງໃຫ້ປະຊາຊົນເຂົ້າໃຈ ແລະ ນໍາເອົາບາງບັນຫາເຫຼົ່ານັ້ນ ມາຄົ້ນຄວ້າ ເພື່ອສະເໜີຕໍ່ໃນກອງປະຊຸມສະໄໝສາມັນຂອງ ສພຂ ແລະ ສພຊ.



ໂອກາດລົງເຄື່ອນໄຫວເຮັດວຽກຢູ່ແຂວງສາລະວັນຄັ້ງນີ້, ທ່ານຮອງປະທານກໍາມາທິການການຕ່າງປະເທດ ຍັງໄດ້ນໍາເອົາເຄື່ອງອຸປະໂພກ-ບໍລິໂພກທີ່ຈໍາເປັນມອບໃຫ້ຄອບຄົວທີ່ຖືກອັກຄີໄພ ຈໍານວນ 8 ຄອບຄົວທີ່ບ້ານບຶງໄຊ ລວມມູນຄ່າ 8.5 ລ້ານກີບ ແລະ ມອບອຸປະກອນກິລາຈໍານວນໜຶ່ງ ໃຫ້ຫ້ອງການຄະນະສະມາຊິກສະພາປະຊາຊົນແຂວງປະຈໍາ 3 ເມືອງທີ່ລົງໄປເຄື່ອນໄຫວເຮັດວຽກ ລວມມູນຄ່າ 3.9 ລ້ານກີບ ອີກດ້ວຍ.



# ເຜີຍແຜ່ຜົນສໍາເລັດກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ



(ສພຊ) - ເພື່ອໃຫ້ສະມາຊິກແມ່ຍິງມີຄວາມຮັບຮູ້ເຂົ້າໃຈຢ່າງຖືກຕ້ອງ ແລະ ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ-ລັດ ທັງສາມາດນໍາເອົາແນວທາງ ແລະ ເນື້ອໃນທີ່ໄດ້ຮັບຮູ້ໄປຜັນຂະຫຍາຍ ແລະ ປະຕິບັດເຂົ້າໃນວຽກງານວິຊາສະເພາະຂອງຕົນ ໃຫ້ເກີດຜົນສໍາເລັດ; ວັນທີ 12 ມິຖຸນານີ້, ສະຫະພັນແມ່ຍິງສະພາແຫ່ງຊາດ ໄດ້ເຜີຍແຜ່ຜົນສໍາເລັດກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດຄັ້ງທີ IX ໂດຍມີຄະນະບໍລິຫານງານສະຫະພັນແມ່ຍິງ, ຕາງໜ້າຄະນະບໍລິຫານງານສະຫະພັນກໍາມະບານ, ຄະນະບໍລິຫານງານຊາວໜຸ່ມ ພ້ອມດ້ວຍສະມາຊິກສະຫະພັນແມ່ຍິງພາຍໃນສະພາແຫ່ງຊາດ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນກອງປະຊຸມ, ທ່ານ ນາງ ກັນທິນາ ປ້ານອິນທອນ ຮອງປະທານຄະນະບໍລິຫານງານສະຫະພັນແມ່ຍິງສະພາແຫ່ງຊາດ ໃຫ້ຮູ້ວ່າ: ກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດຄັ້ງທີ IX ໄດ້ຮັບຮອງເອົາລາຍງານການເມືອງ ທີ່ກໍານົດທິດທາງ, ຄາດໝາຍສູ້ຊົນ 5 ປີ (2026-2030), ວິໄສທັດຮອດປີ2035, ແຜນພັດທະນາແມ່ຍິງລາວ 5 ປີ (2026-2030) ເຊິ່ງມີ 9 ເປົ້າໝາຍ, 31 ແຜນວຽກຈຸດສຸມ ແລະ 144 ວຽກຈຸດສຸມ; ກົດລະບຽບຂອງສະຫະພັນແມ່ຍິງລາວ ສະໄໝທີ IX; ຄໍາຂວັນ ແລະ ຂໍ້ແຂ່ງຂັນ ຂອງສະຫະພັນແມ່ຍິງລາວ ສະໄໝ IX "ພັດທະນາຄວາມສະເໝີພາບຍິງ-ຊາຍ ຕິດພັນກັບການພັດທະນາປະເທດຊາດ" ແລະ ຂໍ້ແຂ່ງຂັນ 3 ດີ ຄື: "ພົນລະເມືອງດີ, ພັດທະນາດີ ແລະ ສ້າງຄອບຄົວດີ". ພ້ອມນັ້ນ, ຍັງໃຫ້ຮູ້ຕື່ມອີກວ່າ: ກອງປະຊຸມໃຫຍ່ ໄດ້ເລືອກຕັ້ງ ແລະຮັບຮອງເອົາຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ສະໄໝທີ IX ຈໍານວນ 61 ທ່ານ ແລະ ຮັບຮອງເອົາທ່ານ ນາງ ອາລີ ວົງໜໍ່ບຸນທໍາ ເປັນປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ; ຮອງປະທານ 3 ທ່ານ ຄື: ທ່ານ ນາງ ທໍາມາ ເພັດວິໄຊ, ທ່ານ ນາງ ພັນຈິນດາ ເລັ່ງສະຫວັດ ແລະ ທ່ານ ນາງ ຜາສຸກ ວົງວິຈິດ ທັງເປັນປະທານຄະນະກວດກາ; ທ່ານ ນາງ ພູຄໍາ ຄັດສະຫວ່າງ ເປັນຮອງປະທານຄະນະກວດກາ ແລະ ກໍາມະການກວດກາອີກ 2 ທ່ານ.

ນອກນັ້ນ, ຍັງໄດ້ຮັບຟັງການເຜີຍແຜ່ກົດລະບຽບຂອງສະຫະພັນແມ່ຍິງ, ບົດສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາແມ່ຍິງ 5 ປີ (2020-2024) ແລະ ທິດທາງແຜນການ 5 ປີ (2025-2029) ຂອງສະພັນແມ່ຍິງສະພາແຫ່ງຊາດ.



## ປະທານ...

(ຕໍ່ຈາກໜ້າ 1)

ລາວ-ສິງກະໂປ ແລະ ບັນຫາທີ່ສອງຝ່າຍສົນໃຈຮ່ວມກັນ.

ໃນການພົບປະ, ທ່ານ ໂພໄຊ ໄຂຄໍາພິທູນ ໄດ້ສະແດງຄວາມຍິນດີຕ້ອນຮັບແລະຂອບໃຈຕໍ່ການສະໜັບສະໜູນຢ່າງຕໍ່ເນື່ອງຂອງລັດຖະບານສິງກະໂປຕໍ່ກັບການພັດທະນາຂອງ ສປປ ລາວ ເປັນຕົ້ນແມ່ນການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນ ແລະ ຈະສືບຕໍ່ຮ່ວມມືກັນຢ່າງໃກ້ຊິດ ເພື່ອຊຸກຍູ້ການຜັນຂະຫຍາຍບັນດາຂໍ້ຕົກລົງຮ່ວມທີ່ສອງລັດຖະບານລົງນາມ ໃຫ້ເກີດເປັນຮູບປະທໍາ. ທັງສອງຝ່າຍໄດ້ສະແດງຄວາມພໍໃຈຕໍ່ການພັດທະນາສາຍພົວພັນມິດຕະພາບແລະການຮ່ວມມືອັນດີລະຫວ່າງສອງປະເທດ ໂດຍສະເພາະດ້ານການພັດທະນາຊັບພະຍາກອນມະນຸດ, ການສຶກສາ ແລະ ການເຝິກອົບຮົມ ພາຍໃຕ້ໂຄງການຮ່ວມມືຕ່າງໆຂອງສິງກະໂປ; ພ້ອມກັນນັ້ນ, ຍັງໄດ້ຫາລືກ່ຽວກັບການຮ່ວມມືໃນຂົງເຂດວຽກງານດິຈິຕອນ, ຄວາມປອດໄພທາງໄຊເບີ, ສາທາລະນະສຸກ ແລະ ພະລັງງານສະອາດ.

ທ່ານເອກອັກຄະລັດຖະທູດ ໄດ້ກ່າວສະແດງຄວາມຂອບໃຈຕໍ່ທ່ານປະທານກໍາມາທິການການຕ່າງປະເທດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຈະສືບຕໍ່ເປັນຂົວຕໍ່ທີ່ດີໃນການຊຸກຍູ້ການຮ່ວມມືລະຫວ່າງສອງປະເທດ ໃຫ້ເຂົ້າສູ່ລວງເລິກຍິ່ງໆຂຶ້ນ ເວົ້າລວມ, ເວົ້າສະເພາະ ກໍຄືການພົວພັນຮ່ວມມືລະຫວ່າງລັດຖະສະພາສິງກະໂປ ແລະ ສະພາແຫ່ງຊາດລາວ ໃຫ້ນັບມື້ນັບໄດ້ຮັບການພັດທະນາຍິ່ງໆຂຶ້ນ.

# ສປນວ ຊຸກຍູ້ການສ້າງຕັ້ງຫ້ອງການຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ປະຈຳເຂດເລືອກຕັ້ງເມືອງ




(ສພຂ) - ວັນທີ 2-5 ມິຖຸນາຜ່ານມາ, ສະພາປະຊາຊົນນະຄອນຫຼວງວຽງຈັນ ນຳໂດຍ: ທ່ານ ນະຄະເສນ ສີຫາລາດ ກຳມະການພັກ ນວ, ຮອງປະທານສະພາປະຊາຊົນ ນວ ພ້ອມດ້ວຍຄະນະປະຈຳສະພາປະຊາຊົນ ນວ, ຄະນະຈັດຕັ້ງ ນວ, ພະແນກການເງິນ ນວ ແລະ ຂະແໜງການທີ່ກ່ຽວຂ້ອງຂອງສະພາປະຊາຊົນໄດ້ສຳເລັດການລົງເຄື່ອນໄຫວຊຸກຍູ້ການສ້າງຕັ້ງ ຫ້ອງການຄະນະສະມາຊິກ ສະພາປະຊາຊົນນະຄອນຫຼວງວຽງຈັນ ປະຈຳເຂດເລືອກຕັ້ງເມືອງ ທີ່ເມືອງຫາດຊາຍຟອງ, ເມືອງໄຊເສດຖາ, ເມືອງນາຊາຍທອງ, ເມືອງຈັນທະບູລີ ແລະ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ, ເຊິ່ງໃຫ້ກຽດຕ້ອນຮັບໂດຍ ບັນດາທ່ານ ເລຂາພັກເມືອງ, ປະທານ-ຮອງປະທານຄະນະກຳມະການປົກຄອງເມືອງ, ສະມາຊິກສະພາປະຊາຊົນ ນວ ປະຈຳເຂດເລືອກຕັ້ງເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນເມືອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການລາຍງານແຜນການກະກຽມສ້າງຕັ້ງ ຫ້ອງການຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ປະຈຳເຂດເລືອກຕັ້ງເມືອງ, ພ້ອມກັນຄົ້ນຄວ້າປຶກສາຫາລື ໂຄງປະກອບບຸກຄະລາກອນ, ຄວາມພ້ອມໃນການກະກຽມສ້າງຕັ້ງຫ້ອງການດັ່ງກ່າວເປັນຕົ້ນ: ດ້ານສະຖານທີ່ຫ້ອງການ, ບຸກຄະລາກອນ ແລະ ງົບປະມານ ພ້ອມທັງຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການເຄື່ອນໄຫວວຽກງານເພື່ອຊຸກຍູ້ການປັບປຸງກົງຈັກການຈັດຕັ້ງ ແລະ ບຸກຄະລາກອນເຮັດໃຫ້ວຽກງານຂອງຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ ປະຈຳເຂດເລືອກຕັ້ງເມືອງດັ່ງກ່າວໃຫ້ເປັນລະບົບ ແລະ ມີຄວາມເຂັ້ມແຂງຍິ່ງຂຶ້ນ ໃນຕໍ່ໜ້າ.

ໃນແຜນຕໍ່ໜ້າ, ຄະນະດັ່ງກ່າວຍັງຈະໄດ້ສືບຕໍ່ລົງເຄື່ອນໄຫວຊຸກຍູ້ ບັນດາເມືອງອື່ນໆຕື່ມອີກ ເພື່ອໃຫ້ສຳເລັດທົ່ວນະຄອນຫຼວງວຽງຈັນ.




# ສສຂ ອຸດົມໄຊ ພົບປະຜູ້ມີສິດເລືອກຕັ້ງຢູ່ຫຼາຍເມືອງ




(ສພຂ) - ໃນລະຫວ່າງວັນທີ 27-29 ພຶດສະພາຜ່ານມານີ້, ທ່ານ ສຸດໃຈ ສຸດແສງເດືອນ, ທ່ານ ຄຳຊຽນ ອິດນຸຄານ ແລະ ທ່ານ ພັທ ສົມພອນສຸລິເຮືອງ ສະມາຊິກສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງໄຊ ພ້ອມດ້ວຍຄະນະ, ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ບ້ານກ່ອນແກນ, ນາມົນ, ນາຮ້ອງ, ຫ້ວຍຮູມ, ຫ້ວຍໝອກ ແລະ ບ້ານວັງຍານ ມີເລຂາພັກບ້ານ, ປະທານອົງການປົກຄອງບ້ານແລະພໍ່ແມ່ປະຊາຊົນ ພາຍໃນ 6 ບ້ານເຂົ້າຮ່ວມທັງຫມົດ 223 ຄົນ, ຍິງ 81 ຄົນ.

ການລົງພົບປະຜູ້ມີສິດເລືອກຕັ້ງໃນຄັ້ງນີ້, ບັນດາທ່ານສາມຊິກສະພາປະຊາຊົນແຂວງ ຊຸດທີ V, ໄດ້ສະແດງຄວາມຂອບອົກຂອບໃຈ ມາຍັງພໍ່ແມ່ປະຊາຊົນ, ທີ່ໃຫ້ຄວາມໄວ້ເນື້ອເຊື່ອໃຈ ເລືອກເອົາຕົນມາເປັນຕົວແທນ ໃນການນຳໃຊ້ສິດປະຊາທິປະໄຕເຂົ້າສະພາ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ.

ພ້ອມກັນນັ້ນ, ບັນດາທ່ານຍັງໄດ້ນຳເອົາບັນດາເນື້ອໃນຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V, ບັນດາມະຕິຕ່າງໆ ທີ່ໄດ້ພິຈາລະນາ, ຮັບຮອງເອົາໃນ 2 ກອງປະຊຸມດັ່ງກ່າວ ມາເຜີຍໃຫ້ພໍ່ແມ່ນປະຊາຊົນຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ຕື່ມອີກ.

ແລະ ໃນ 27-29 ພຶດສະພາ ທີ່ຜ່ານມານີ້, ທ່ານ ທະນູໄຊ ເລືອງສະຫວັດ, ທ່ານ ສົມຈິດ ອຸໄລທອນ ແລະ ທ່ານ ນາງ ສີວັນ ທະວີໄຊ ສະມາຊິກສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຮຸນ ພ້ອມດ້ວຍຄະນະ, ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງຢູ່ບ້ານສີບຸນເຮືອງ, ນ້ຳຍ່ອນ, ຈັນໄຕ, ກອນເທີຍ, ຈັນວາງ ແລະ ບ້ານ ພູສອນ ມີເລຂາຄະນະພັກຮາກຖານ, ອົງການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນພາຍໃນ 6 ບ້ານເຂົ້າຮ່ວມທັງໝົດ 338 ຄົນ, ຍິງ 123 ຄົນ.

ການລົງພົບປະຜູ້ມີສິດເລືອກຕັ້ງໃນຄັ້ງນີ້, ບັນດາທ່ານສາມຊິກສະພາປະຊາຊົນແຂວງ ຊຸດທີ V, ໄດ້ສະແດງຄວາມຂອບອົກຂອບໃຈ ມາຍັງພໍ່ແມ່ປະຊາຊົນ, ທີ່ໃຫ້ຄວາມໄວ້ເນື້ອເຊື່ອໃຈ ເລືອກເອົາຕົນມາເປັນຕົວແທນ ໃນການນຳໃຊ້ສິດປະຊາທິປະໄຕຢູ່ສະພາ ເພື່ອເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ສະພາປະຊາຊົນຂັ້ນແຂວງ.

ພ້ອມກັນນັ້ນ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ, ໄດ້ພັດປ່ຽນກັນນຳເອົາບັນດາເນື້ອໃນຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນແຂວງ ຊຸດທີ V, ບັນດາມະຕິຕ່າງໆ ທີ່ໄດ້ພິຈາລະນາ, ຮັບຮອງເອົາໃນ 2 ກອງປະຊຸມດັ່ງກ່າວມາເຜີຍໃຫ້ພໍ່ແມ່ນປະຊາຊົນຮັບຮູ້ແລະເຂົ້າໃຈຢ່າງເລິກເຊິ່ງ ແລະ ຫຼັງຈາກນັ້ນຍັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຕ່າງໆ ຈາກປະຊາຊົນຕື່ມອີກ.

# ເຊື່ອມຊຶມເອກະສານໃຫ້ພະນັກງານສະພາປະຊາຊົນແຂວງ



(ສພຂ)- ໃນວັນທີ 20 ພຶດສະພາຜ່ານມານີ້, ຢູ່ທີ່ສະພາປະຊາຊົນແຂວງຫຼວງພະບາງ ໄດ້ຈັດຕັ້ງການ ເຜີຍແຜ່ເຊື່ອມຊຶມເອກະສານພາຍໃນ ສະພາປະຊາຊົນແຂວງຂຶ້ນ ພາຍໃຕ້ການເປັນປະທານຂອງທ່ານ ປອ. ສົມໃຈ ຢ່າທໍ່ຕູ້ ຄະນະປະຈຳ, ຫົວໜ້າ ຫ້ອງວ່າການສະພາປະຊາຊົນແຂວງ ເຂົ້າຮ່ວມມີທ່ານຮອງປະທານຄະນະກຳມະການ, ບັນດາທ່ານ ຮອງຫົວໜ້າຫ້ອງວ່າການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານຊ່ວຍວຽກ ພາຍໃນສະພາປະຊາຊົນແຂວງເຂົ້າຮ່ວມ.

ເນື້ອໃນເອກະສານທີ່ນຳມາເຜີຍແຜ່ ປະກອບມີຄື: ຂໍ້ຕົກລົງວ່າດ້ວຍການແບ່ງຄວາມຮັບຜິດຊອບພາຍໃນ ຄະນະຫ້ອງວ່າການສະພາປະຊາຊົນແຂວງ ຊຸດທີ V, ຂໍ້ກຳນົດ ຂອງຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຈໍລະຈອນ ແລະ ກຳນົດເວລາ ໃນການຄົ້ນຄວ້າເອກະສານ ຢູ່ສະພາປະຊາຊົນແຂວງຫຼວງພະບາງ. ການຈັດຕັ້ງການເຜີຍແຜ່ເອກະສານ ຄັ້ງນີ້ ເພື່ອໃຫ້ພະນັກງານ-ລັດຖະກອນ ທີ່ເປັນເສນາທິການ ພາຍໃນສະພາປະຊາຊົນແຂວງ ໃຫ້ມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງແລະເປັນເອກະພາບກັນໃນການຈັດຕັ້ງປະຕິບັດ, ຮັບປະກັນໃຫ້ການຈໍລະຈອນເອກະສານມີຄວາມສະດວກ, ວ່ອງໄວ, ເປັນລະບົບ, ຫຼຸດຜ່ອນການຊັກຊ້າ, ຄວາມເສຍຫາຍຂອງເອກະສານ, ຍົກສູງຄວາມຮັບຜິດຊອບ ແລະ ປະຕິບັດຕາມຫຼັກການ ການຈໍລະຈອນເອກະສານຜ່ານ "ປະຕູດຽວ" ຢ່າງເຂັ້ມງວດ ຮັບປະກັນການຈັດຕັ້ງເຄື່ອນໄຫວວຽກງານໃຫ້ມີໂລ່ງລ່ຽນ, ຮັດກຸມ, ວ່ອງໄວ, ຮັບປະກັນໄດ້ປະສິດທິພາບ, ປະສິດທິຜົນ ທັນກັບສະພາບການທັງຖືກຕ້ອງສອດຄ່ອງກັບນິຕິກຳ ແລະ ກົດໝາຍ.

ແລະ ໃນລະຫວ່າງ ວັນທີ 10 ຫາ 14 ພຶດສະພາ ທີ່ຜ່ານມານີ້, ຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ ໄດ້ເຄື່ອນໄຫວລົງຕິດຕາມກວດການຈັດຕັ້ງປະຕິບັດ ການສ້າງຄວາມເຂັ້ມແຂງຄວາມສະເໝີພາບ ຍິງ-ຊາຍ ຢູ່03ບ້ານຂອງເມືອງປາກແຊງ ແຂວງຫຼວງພະບາງ ໂດຍການເປັນປະທານຮ່ວມຂອງທ່ານ ອານຸສັກ ພອນສະຫວັນ ຄະນະປະຈຳ, ປະທານຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ ແລະ ທ່ານ ປອ ສົມໃຈ ຢາທໍ່ຕູ້ ຄະນະປະຈຳ, ຫົວໜ້າຫ້ອງວ່າການສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ຈຳນວນ 10 ທ່ານ.

ການເຄື່ອນໄຫວຂອງຄະນະກຳມະການໃນຄັ້ງນີ້ ກໍ່ເພື່ອເປັນການຊຸກຍູ້ ແລະ ເຊື້ອມຊຶມໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າເຂົ້າໃຈເຖິງຄວາມໝາຍ, ຄວາມສຳຄັນ ຄວາມສະເໝີພາບ ຍິງ-ຊາຍ ໃຫ້ຫຼາຍຂຶ້ນ, ໃນໂອກາດທີ່ລົງໄປເຄື່ອນໄຫວວຽກງານໃນຄັ້ງນີ້, ທາງຄະນະ ກໍໄດ້ຮັບຟັງການລາຍງານໂດຍຫຍໍ້ ຈາກອຳນາດການປົກຄອງບ້ານຕໍ່ກັບການເຄື່ອນໄຫວວຽກງານຄວາມສະເໝີພາບ ຍິງ-ຊາຍ ພາຍໃນບ້ານໃນໄລຍະຜ່ານ, ເຫັນວ່າທຸກບ້ານໄດ້ເອົາໃຈໃສ່ ເຫັນໄດ້ຄວາມສຳຄັນ ແລະ ໄດ້ຍົກສູງບົດບາດຍິງ-ຊາຍ ຢູ່ພາຍໃນບ້ານເຮັດໃຫ້ປະກົດການຫຍໍ້ທໍ້ ພາຍໃນບ້ານລຸດນ້ອຍຖ້ອຍລົງ, ຈາກນັ້ນປະທານກອງປະຊຸມກໍ່ໄດ້ມີການໂອລົມ ພ້ອມທັງເຊື່ອມຊຶມບາງເນື້ອໃນຂອງລັດຖະທຳມະນູນແຫ່ງ ສປປລາວ (ສະບັບປັບປຸງ ປີ 2025), ກົດໝາຍ ວ່າດ້ວຍ ຄວາມສະເໝີພາບ ຍິງ-ຊາຍ ແລະ ເຜີຍແຜ່ມະຕິ ກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງຫຼວງພະບາງ.

**(ເພັດສະໝອນ ທຳມຸງຄຸນ ແລະ ວິລິຍະ ວັນນະ)**

## ສພຂ ຫົວພັນ ຕິດຕາມກວດກາໂຄງການຂຸດຄົ້ນແຮ່ຫາຍາກ



(ສພຂ)- ວັນທີ 15 ພຶດສະພາ ຜ່ານມານີ້, ນຳໂດຍທ່ານ ສໍສະຫວັນ ບານຄຳມີ ຄະນະປະຈຳສະພາປະຊາຊົນແຂວງ, ປະທານ ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ສະພາປະຊາຊົນແຂວງຫົວພັນ ພ້ອມຄະນະທີມງານ ລົງຊຸກຍູ້ ຕິດຕາມກວດກາ ໂຄງການຂຸດຄົ້ນແຮ່ຫາຍາກ ຂອງບໍລິສັດ ຮວາລີ ບ້ານໜອງແຮດ ເມືອງຊຳໃຕ້ ແຂວງຫົວພັນ ການລົງເຄື່ອນໄຫວຄັ້ງນີ້ໄດ້ຮັບຟັງການລາຍງານສະພາບໂດຍຫຍໍ້ ຈາກພະນັກງານລັດປະຈຳພາກສະໜາມ ຕໍ່ກັບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ຂອງບໍລິສັດດັ່ງກ່າວ.

ຈາກນັ້ນ, ທ່ານ ສໍສະຫວັນ ບານຄຳມີ ຄະນະປະຈຳສະພາປະຊາຊົນແຂວງ ຕາງໜ້າທີມງານ ລົງຊຸກຍູ້ ຕິດຕາມກວດກາໃນຄັ້ງນີ້ ມີຄຳເຫັນເນັ້ນໜັກວ່າ: ພະນັກງານວິຊາການຂອງລັດທີ່ປະຈຳຢູ່ພາກສະໜາມ ແລະບໍລິສັດທີ່ຂຸດຄົ້ນພ້ອມກັນເອົາໃຈໃສ່ປະສານງານກັນໃຫ້ກົມກຽວ, ແກ້ໄຂບັນຫາທີ່ປະຊາຊົນສະເໜີແກ້ໄຂໃຫ້ໄວ ແລະ ທັນກຳນົດເວລາ, ເອົາໃຈໃສ່ຕິດຕາມ - ກວດກາແກ້ໄຂບັນຫາສິ່ງແວດລ້ອມ ເຂດຜະລິດແຮ່-ເຂດທີ່ພັກ ອາໄສພະນັກງານ ແລະ ກຳມະກອນ ເກັບຕົວຢ່າງ ແລະ ກວດການ້ຳເປັນປົກກະຕິ, ທັນການທັນເວລາ ສະກັດກັ້ນເຂດທີ່ມີຄວາມສ່ຽງ ທີ່ສານເຄມີຈະຮົ່ວໄຫລລົງສູ່ຫ້ວຍນ້ຳຕ່າງໆ, ເຂດທີ່ທຳການຜະລິດກະສິກຳ, ອ້ອມຮົ້ວປ້ອງກັນບໍ່ໃຫ້ສັດມາອາໄສຢູ່ ແກ້ໄຂຄຳສະເໜີ ຂອງຄອບຄົວປະຊາຊົນໃນພື້ນທີ່ ທີ່ໄດ້ຮັບຜົນກະທົບທີ່ຄ້າງຄາໃນໄລຍະຜ່ານມາ ແລະ ຄາດວ່າຈະເກີດຂຶ້ນໃນອານາຄົດຕໍ່ໜ້າ ໃຫ້ປະຕິບັດຕາມ ຂໍ້ຕົກລົງວ່າດ້ວຍການຄິດໄລ່, ທົດແທນຜົນເສຍຫາຍ ຈາກໂຄງການຕ່າງໆ ທີ່ແຂວງກຳນົດໄວ້ຕາມລະບຽບການ.

ໂອກາດນີ້ ທາງທີມງານກໍໄດ້ລົງລົງຕິດຕາມກວດກາຢູ່ພາກສະໜາມຕື່ມອີກ.



## ອະດີດຮອງປະທານສະພາແຫ່ງຊາດເຄື່ອນໄຫວຢ້ຽມຢາມສະພາປະຊາຊົນແຂວງຈຳປາສັກ



(ສພຂ) - ວັນທີ 29 ພຶດສະພາ 2026 ນີ້, ຄະນະນຳຂອງສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ນຳໂດຍທ່ານ ອາລຸນໄຊ ສູນນະລາດ ກຳມະການສູນກາງພັກ, ເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຈຳປາສັກ ພ້ອມຄະນະໄດ້ຕ້ອນຮັບ ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ອະດີດກຳມະການສູນກາງພັກ, ອະດີດຮອງປະທານສະພາແຫ່ງຊາດ ພ້ອມຄະນະໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສພຂ ເພື່ອຕິດຕາມການຈັດຕັ້ງປະຕິບັດວຽກງານນິຕິບັນຍັດ, ວຽກງານກວດກາ ແລະ ການພົວພັນກັບປະຊາຊົນຢູ່ຂັ້ນທ້ອງຖິ່ນ.

ໃນການຢ້ຽມຢາມ, ໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບຜົນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ, ສະພາບລວມການເຄື່ອນໄຫວຂອງອົງຄະນະພັກແຂວງ, ວຽກງານສະພາປະຊາຊົນແຂວງ, ຂໍ້ຫຍຸ້ງຍາກ ແລະ ທິດທາງແຜນການໃນໄລຍະຕໍ່ໜ້າ; ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ໄດ້ຕີລາຄາສູງຕໍ່ຜົນສຳເລັດໃນການປະຕິບັດວຽກງານຂອງອົງຄະນະພັກແຂວງ ແລະ ວຽກງານຂອງ ສພຂ ຕະຫຼອດໄລຍະຜ່ານມາ ໂດຍສະເພາະການປະຕິບັດບົດບາດໜ້າທີ່ຕາມສິດ ແລະ ໜ້າທີ່ທີ່ກົດໝາຍກຳນົດ ທັງເນັ້ນໜັກໃຫ້ສືບຕໍ່ເສີມສ້າງຄວາມເຂັ້ມແຂງໃນການເຮັດວຽກ, ຍົກສູງຄຸນນະພາບການຕິດຕາມກວດກາ ແລະ ຮັບຟັງເກັບກຳຄຳສະເໜີຂອງປະຊາຊົນ ແລະ ຊຸກຍູ້ໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂໃຫ້ສຳເລັດ, ຖືກຕ້ອງສອດຄ່ອງກັບລັດຖະທຳມະນູນ ແລະ ກົດໝາຍ.

ພ້ອມນັ້ນ, ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຍັງຢ້ຽມຊົມເບິ່ງສຳນັກງານຂອງສະພາປະຊາຊົນຈຳປະສັກ ຫາກໍ່ສຳເລັດການຕໍ່ເຕີມຫໍປະຊຸມ ແລະ ຫ້ອງເຮັດວຽກຂອງ 6 ຂະແໜງການ ແລະ ພົບປະຢ້ຽມຢາມຖາມຂ່າວພະນັກງານ ແລະ ປັບປຸງຈັດສັນສະຖານທີ່ເຮັດວຽກຂອງສະພາປະຊາຊົນແຂວງ.

**(ສົມວິຈິດ ໄຊມົນຕີ)**

## ສສຊ ແລະ ສສຂ ພົບປະຜູ້ມີສິດເລືອກຕັ້ງເມືອງໂພນທອງ



(ສພຂ)-ວັນທີ 25-28 ພຶດສະພາ 2026 ນີ້, ທ່ານ ນາງ ມີນາ ສີວິໄລ ກຳມະການສຳຮອງສູນກາງພັກ, ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ສົມທົບກັບທ່ານ ໄຊຍະເພັດ ຊາພິຈິດ ຮອງປະທານຄະຄະນະກຳມະການວັດທະນະທຳສັງຄົມ, ບັນດາເຜົ່າ ແລະ ສາສະໜາ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງໂພນທອງ ແລະ ທ່ານ ພັທ. ຈັນໄທ ຊົມພູ ຫົວໜ້າກອງບັນຊາການທະຫານເມືອງໂພນທອງ, ສສຂ ປະຈຳເຂດເລືອກຕັ້ງເມືອງໂພນທອງ ໄດ້ເຄື່ອນໄຫວພົບປະຢ້ຽມຢາມຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດ ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ຊຸດທີ V ຢູ່ບ້ານດອນຊາດ, ບ້ານໜອງບົວ, ບ້ານໂນນສະອາດ, ບ້ານໂນນພະເຈົ້າ, ບ້ານໂພນທອງ ແລະ ບ້ານອຸປະຫຼາດ ຂອງເມືອງໂພນທອງ ໂດຍການຕ້ອນຮັບຈາກການນຳຂອງເມືອງ, ຄະນະນຳຂັ້ນບ້ານຕະຫຼອດຮອດພໍ່ແມ່ປະຊາຊົນຕ້ອນຮັບຢ່າງອົບອຸ່ນ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານຈາກຕາງໜ້າອົງການປົກຄອງຕາແສງ ແລະບ້ານກ່ຽວກັບສະພາບລວມການຈັດຕັ້ງປະຕິບັດວຽກງານ ແລະ ສະເໜີບາງບັນຫາ ທີ່ຕິດພັນກັບຊີວິດການເປັນຢູ່ຂອງປະຊາຊົນພາຍໃນບ້ານ; ຈາກນັ້ນ, ບັນດາທ່ານ ສສຊ ແລະ ສສຂ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຊ ຊຸດທີ X ແລະ ສພຂ ຈຳປາສັກ ຊຸດທີ V ໂດຍໄດ້ຄັດຈ້ອນເອົາບາງເນື້ອໃນທີ່ສຳຄັນ ແລະ ມີຄວາມຕິດພັນກັບຊີວິດການເປັນຢູ່ຂອງປະຊາຊົນ ເຊິ່ງຍົກໃຫ້ເຫັນການພິຈາລະນາ, ຮັບຮອງການເລືອກຕັ້ງຕຳແໜ່ງສຳຄັນຕ່າງໆ ຂອງ ສພຊ ແລະ ສພຂ ຈຳປາສັກ ໃຫ້ຄົບຖ້ວນຕາມອົງປະກອບ ຂອງ ສພຊ ແລະ ສພຂ ພິຈາລະນາ ຮັບຮອງ ການປັບປຸງໂຄມກຳມາທິການຂອງສະພາແຫ່ງຊາດ ແລະ ບັນດາວຽກງານຂອງລັດຖະບານ ເປັນຕົ້ນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງລັດຖະບານ ໃນນັ້ນ, ໄດ້ພິຈາລາຮັບຮອງເອົາແຜນການສ້າງເສັ້ນທາງລົດໄຟ ຈາກແຂວງຄຳມ່ວນ ຫາ ສສ.ຫວຽດນາມ, ແຜນການສ້າງ ແລະ ປັບປຸງ ລັດຖະທຳມະນູນ ແລະ ກົດໝາຍ, ວຽກງານໃນຂົງເຂດສຶກສາທິການ, ສາທາລະນະສຸກ ແລະ ແຜນການແກ້ໄຂບັນຫາຄວາມຫຍຸ້ງຍາກຕ່າງໆທີ່ເກີດຂຶ້ນໃນຕ່ລະທ້ອງຖິ່ນ.

ຈາກນັ້ນ, ບັນດາທ່ານ ສສຊ-ສສຂ ຍັງໄດ້ຊີ້ແຈງອະທິບາຍຕໍ່ບາງເນື້ອໃນຄຳສະເໜີ ພ້ອມທັງຮຽກຮ້ອງໃຫ້ປະຊາຊົນຜູ້ມີສິດເລືອກຕັ້ງ ຈົ່ງພ້ອມກັນຮັກສາມູນເຊື້ອອັນດີງາມ, ສ້າງຄວາມສະໜາມສາມັກຄີພາຍໃນ, ປະກອບສ່ວນທຸກກຳລັງແຮງໃນການພັດທະນາເສດຖະກິດ-ສັງຄົມ ກໍ່ຄືພັດທະນາຊີວິດການເປັນຢູ່ສ້າງເສດຖະກິດຄອບຄົວໃຫ້ມີຄວາມເຂັ້ມແຂງເປັນກ້າວໆ.

**(ພູວັນ ສີລະປະສິນ)**



# ເຜີຍແຜ່ຜົນສຳເລັດກອງປະຊຸມ ຄັ້ງປະຖົມມະລຶກຢູ່ເມືອງຊະນະສົມບູນ



(ສພຂ)-ວັນທີ27-28 ພຶດສະພາ 2026 ນີ້, ທ່ານ ນາງ ພອນເພັດ ອຸ່ນແກ້ວ ຮອງປະທານກຳມາທິການກົດໝາຍ ແລະ ຍຸຕິທຳສະພາແຫ່ງຊາດ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ແລະ ທ່ານ ຄຳສີ ຫຼີນສະຫວາດ ເລຂາຄະນະບໍລິຫານງານພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ(ສສຂ)ປະຈຳເຂດເລືອກຕັ້ງເມືອງຊະນະສົມບູນ ພ້ອມຄະນະ ໄດ້ເຄື່ອນໄຫວລົງພົບປະຢ້ຽມຢາມ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ(ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ V ຢູ່ຕາແສງວັງເວີນ, ຕາແສງໜອງດູ່, ຕາແສງສະຜ່າຍ ແລະ ຕາແສງບຸ່ງຄ້າ ໂດຍການຕ້ອນຮັບຂອງປະທານຄະນະກຳມະການປົກຄອງຕາແສງ ພ້ອມດ້ວຍຄະນະນຳ, ມີອົງການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນເຂົ້າຮ່ວມ.

ໃນການເຄື່ອນໄຫວ, ໄດ້ລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ; ຈາກນັ້ນ, ບັນດາທ່ານ ສສຊປະຈຳເຂດເລືອກຕັ້ງທີ15 ແຂວງຈຳປາສັກ ແລະ ສສຂ ປະຈຳເຂດເລືອກຕັ້ງເມືອງຊະນະສົມບູນ ໄດ້ຜັດປ່ຽນກັນຂຶ້ນເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຊ ຊຸດທີ X ແລະ ສພຂ ຊຸດທີ V ໃຫ້ປະຊາຊົນຜູ້ມີສິດເລືອກຕັ້ງໄດ້ຮັບຮູ້ ແລະ ເຂົ້າໃຈ ທັງເປັນການລົງພົບປະຜູ້ມີສິດເລືອກຕັ້ງເພື່ອເປັນການເກັບກຳຄຳຄິດ-ຄຳເຫັນຕໍ່ວຽກງານການຄຸ້ມຄອງບໍລິຫານລັດ; ພ້ອມນັ້ນ, ຍັງໄດ້ເປີດໂອກາດໃຫ້ ອົງການຈັດຕັ້ງຂັ້ນບ້ານ ກໍຄືປະຊາຊົນ ສະເໜີຄຳຄິດຄຳເຫັນ ໂດຍສະເພາະບັນຫາຕົວຈິງທີ່ຕິດພັນການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ເພື່ອນຳສະເໜີ ຕໍ່ຂະແໜງການກ່ຽວຂ້ອງນຳໄປປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂໃນຂັ້ນຕໍ່ໄປ.

**(ຄະນະໂຄສະນາອົບຮົມ ເມືອງຊະນະສົມບູນ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

ແຂວງ, ພະນັກງານຫຼັກແຫຼ່ງ, ນາຍ ແລະ ພົນທະຫານ-ພົນຕຳຫຼວດ, ອົງການປົກຄອງເມືອງ-ຕາແສງ, ພະນັກງານອາວຸໂສບຳນານ, ພະນັກງານ-ລັດຖະກອນ ຕະຫຼອດຮອດການຈັດຕັ້ງບ້ານ, ພໍ່ແມ່ປະຊາຊົນ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວ, ໄດ້ຮັບຟັງບົດລາຍງານການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ; ຈາກນັ້ນ, ບັນດາທ່ານສສຊ ແລະ ສສຂ ໄດ້ຜັນປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X ແລະ ສພຂ ສາລະວັນ ຊຸດທີ V ເຊິ່ງໄດ້ຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ທ້ອງຖິ່ນ ເປັນຕົ້ນການຮັບຮອງເອົາໂຄງປະກອບດ້ານບຸກຄະລາກອນ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນການສ້າງ ແລະ ປັບປຸງກົດໝາຍ-ນິຕິກຳໃຕ້ກົດໝາຍ, ການປັບປຸງ ແລະ ຮັບຮອງເອົາກົງຈັກຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ, ການເລືອກຕັ້ງຕຳແໜ່ງສຳຄັນຕ່າງໆຂອງອົງການອຳນາດແຫ່ງລັດ ແລະ ອົງການປົກຄອງທ້ອງຖິ່ນ; ພ້ອມກັນນັ້ນ, ຍັງໄດ້ເປີດໂອກາດໃຫ້ພໍ່ແມ່ປະຊາຊົນສະເໜີຄຳຄິດຄຳເຫັນ ເຊິ່ງສ່ວນຫຼາຍຕິດພັນກັບວຽກງານການພັດທະນາເສດຖະກິດ-ສັງຄົມ, ພື້ນຖານໂຄງລ່າງ (ເສັ້ນທາງ, ໄຟຟ້າ, ທີ່ດິນ, ນ້ຳລິນ, ນ້ຳປະປາ, ການຂະຫຍາຍເຄືອຂ່າຍສັນຍານໂທລະສັບ), ປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມ ແລະ ການມົ້ວສຸມສິ່ງເສບຕິດຕ່າງໆ, ການປະຕິບັດນະໂຍບາຍຕໍ່ອົງການຈັດຕັ້ງບ້ານແລະຜູ້ທີ່ມີຜົນງານໃນການປະຕິວັດຊາດ, ຂໍ້ຂັດແຍ້ງດ້ານທີ່ດິນ.

ທ່ານວິໄລວົງ ບຸດດາຄຳ ຍັງມອບຫຼຽນກາລະນຶກໃຫ້ແກ່ ສສຂ ຊຸດທີ IV ແລະ ມອບຄອມພິວເຕີ ໃຫ້ຄະນະຈັດຕັ້ງແຂວງ 5 ຊຸດ, ສະພາປະຊາຊົນແຂວງ 1 ຊຸດ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ 1 ຊຸດ ທັງເຂົ້າຮ່ວມການປູກຕົ້ນໄມ້ຢູ່ໜ້າອາຄານຄະນະຈັດຕັ້ງແຂວງອີກດ້ວຍ.




## ພິທີ...

(ຕໍ່ຈາກໜ້າ 1)

ການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ຜູ້ຊີ້ນຳວຽກງານຫ້ອງວ່າການສະພາແຫ່ງຊາດ, ເຂົ້າຮ່ວມມີທ່ານ ບຸນຈັນ ສີວົງພັນກຳມະການສູນກາງພັກ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ບັນດາຮອງປະທານກຳມາທິການພາຍໃນສະພາແຫ່ງຊາດ, ຄະນະຫ້ອງວ່າການສະພາແຫ່ງຊາດ, ພະນັກງານ-ລັດຖະກອນທີ່ຂຶ້ນກັບຫ້ອງວ່າການສະພາແຫ່ງຊາດ ແລະ ແຂກຖືກເຊີນຈາກຫ້ອງວ່າການສູນກາງພັກ, ຫ້ອງວ່າການສຳນັກງານປະທານປະເທດ ແລະ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.

ໃນພິທີ, ຕາງໜ້າຈາກກົມເລຂານຸການ, ກົມສື່ມວນຊົນ, ກົມກວດກາ, ກົມບໍລິຫານ ແລະ ຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໄດ້ຂຶ້ນລາຍງານສະຫຼຸບວຽກງານໂດຍຫຍໍ້ຂອງກົມທີ່ຂຶ້ນກັບຄະນະເລຂາທິການສະພາແຫ່ງຊາດ (ຫ້ອງວ່າການສະພາແຫ່ງຊາດໃນປັດຈຸບັນ) ໃນຕະຫຼອດໄລຍະ 5 ປີຜ່ານມາ. ຈາກນັ້ນ, ກໍໄດ້ມີການເຊັນບົດບັນທຶກການມອບ-ຮັບໜ້າທີ່ລະຫວ່າງຫົວໜ້າກົມຜູ້ເກົ່າ ແລະ ຫົວໜ້າກົມ, ຮັກສາການຫົວໜ້າກົມ ຜູ້ໃໝ່ ຄື: ກົມຈັດຕັ້ງແມ່ນລະຫວ່າງທ່ານ ແສງແກ້ວ ວົງນະລາດ ແລະ ທ່ານ ສະເຫຼີມໄຊ ນາມບຸດ; ກົມເລຂານຸການແມ່ນລະຫວ່າງທ່ານ ຄຳສະໄໝ ສຳມາວົງ ແລະ ທ່ານ ສຸລະສັກ ສຸວັນນະວົງ; ກົມກວດກາແມ່ນລະຫວ່າງທ່ານ ນາງ ຫວັນໄຊ ຈັນທະລາ ແລະ ທ່ານ ແສງແກ້ວ ວົງນະລາດ; ກົມສື່ມວນຊົນແມ່ນລະຫວ່າງທ່ານ ສຸລະສັກ ສຸວັນນະວົງ ແລະ ທ່ານ ບໍ ຫານ ປະເສີດ; ກົມການເງິນ ແມ່ນລະຫວ່າງທ່ານ ນາງ ດາວເພັດ ສີຫາວົງ ແລະ ທ່ານ ນາງ ເຂັມພອນ ພຸດທະພັນ; ກົມບໍລິຫານ-ພິທີການ, ຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ລວມເຂົ້າເປັນກົມບໍລິຫານ ແມ່ນລະຫວ່າງທ່ານ ພົງສະຫວັນ ແກ້ວລະຄອນ, ທ່ານເພັດພອນໃຈ ສິນລະປະກິດ ແລະ ທ່ານ ຄຳແທ່ນ ວິລະກຸນ.

ໃນພິທີມອບ-ຮັບດັ່ງກ່າວ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍມາຍັງບັນດາທ່ານຫົວໜ້າກົມຜູ້ເກົ່າ ທີ່ໄດ້ທຸ່ມເທສະຕິປັນຍາ, ຄວາມຮູ້ຄວາມສາມາດ, ຄວາມຮັບຜິດຊອບ ແລະ ຄວາມເສຍສະຫຼະ ໃນການປະຕິບັດໜ້າທີ່ຕະຫຼອດໄລຍະຜ່ານມາ ແລະ ໄດ້ສະແດງຄວາມຍິນດີຊົມເຊີຍຕໍ່ບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງເປັນຫົວໜ້າກົມ, ຮັກສາການຫົວໜ້າກົມ ຜູ້ໃໝ່ ທີ່ໄດ້ຮັບຄວາມໄວ້ວາງໃຈຈາກການຈັດຕັ້ງ ໃຫ້ມາຮັບຜິດຊອບໜ້າທີ່ວຽກງານໃນຕຳແໜ່ງໃໝ່; ການຈັດພິທີມອບ-ຮັບໜ້າທີ່ຄັ້ງນີ້ ແມ່ນມີຄວາມໝາຍສຳຄັນ ເພາະເປັນການປະຕິບັດຕາມທິດປັບປຸງກົງຈັກຂອງພັກ-ລັດ ໃຫ້ມີຄວາມກະທັດຮັດ, ໂລ່ງລ່ຽນ ແລະ ມີປະສິດທິຜົນ ເພື່ອໃຫ້ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນຂອງສະພາແຫ່ງຊາດ ຊຸດທີ X ມີຄວາມສອດຄ່ອງກັບສະພາບໜ້າທີ່ວຽກງານຂອງອົງການນິຕິບັນຍັດໃນໄລຍະໃໝ່.

ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ມີຄຳເຫັນເນັ້ນໜັກຕໍ່ບາງບັນຫາໃນຂົງເຂດວຽກງານຂອງຫ້ອງວ່າການສະພາແຫ່ງຊາດເປັນຕົ້ນ: ວຽກງານແນວຄິດ-ການເມືອງ ທີ່ເປັນວຽກໜຶ່ງທີ່ສຳຄັນຫຼາຍ ເພື່ອສ້າງໃຫ້ພະນັກງານມີຄວາມອຸ່ນອຽນທຸ່ນທ່ຽງ, ມີຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມເປັນແບບຢ່າງທີ່ດີ, ມີຄວາມຫ້າວຫັນໃນການປະຕິບັດໜ້າທີ່ວຽກງານ; ສືບຕໍ່ປັບປຸງສັບຊ້ອນ, ຈັດວາງບຸກຄະລາກອນຂັ້ນຮອງຫົວໜ້າກົມ, ຂັ້ນພະແນກ ແລະ ວິຊາການພາຍໃນສະພາແຫ່ງຊາດໃຫ້ສຳເລັດໂດຍໄວ; ເອົາໃຈໃສ່ຍົກສູງຄຸນນະພາບໃນການເປັນເສນາທິການໃນການຄົ້ນຄວ້າກະກຽມເນື້ອໃນຕ່າງໆເປັນຕົ້ນ: ການສ້າງແຜນການ, ການສັງລວມ ແລະ ສະຫຼຸບລາຍງານຜົນການເຄື່ອນໄຫວວຽກງານ ໃຫ້ມີຄວາມຖືກຕ້ອງ, ຮອບດ້ານ ແລະ ທັນເວລາ; ປັບປຸງກົນໄກການປະສານງານພາຍໃນຫ້ອງວ່າການສະພາແຫ່ງຊາດ, ພາຍໃນສະພາແຫ່ງຊາດ ແລະ ກັບບັນດາກະຊວງ-ອົງການກ່ຽວຂ້ອງ ກໍຄືກັບສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມໂລ່ງລ່ຽນ, ຈະແຈ້ງ, ມີຄຸນນະພາບ, ທັນການ; ເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ພະນັກງານ-ລັດຖະກອນຢູ່ຫ້ອງວ່າການສະພາແຫ່ງຊາດ, ວຽກງານພັກ-ພະນັກງານ, ວຽກງານຈັດຕັ້ງ-ກວດກາ, ວຽກງານບໍລິຫານ-ພິທີການ, ວຽກງານການເງິນ, ວຽກງານສື່ມວນຊົນ, ວຽກງານຄຸ້ມຄອງຕຶກສະພາແຫ່ງຊາດເພື່ອເຮັດໃຫ້ວຽກງານຂອງສະພາແຫ່ງຊາດ ດຳເນີນໄປຢ່າງຄ່ອງຕົວ ແລະ ມີປະສິດທິຜົນຍິ່ງໆຂຶ້ນ.





## ສຸຂະສະບາຍຫາຍໂຣຄາ

# ປະໂຫຍດຂອງການດື່ມນໍ້າເຕົາຮູ້ປະສົມໝາກນາວ

ຮຽບຮຽງໂດຍ: ດອກຫຍ້າ



ນໍ້າເຕົ້າຫູ້ ກັບນໍ້າໝາກນາວ ເມື່ອປະສົມເຂົ້າກັນຈະມີລັກສະນະຂຸ້ນຄືກັບໂຍເກີດ ມີລົດຊາດແຊບ, ສົ້ມໆ, ຫວານໆ ເຊິ່ງມີສ່ວນປະສົມຄື: ນໍ້າເຕົາຫູ້ 150-200 ຊີຊີ ປະສົມກັບນໍ້າໝາກນາວ 1 ໜ່ວຍ ທີ່ແຊ່ເຢັນ ແລ້ວເອົາມາບີບໃສ່ນໍ້າເຕົາຫູ້ ຄວນດື່ມທຸກມື້ ຕອນເຊົ້າກ່ອນອາຫານ ມື້ລະ 1 ຈອກ ຈະຮູ້ສຶກໄດ້ເຖິງຄວາມປ່ຽນແປງທີ່ດີຕໍ່ສຸຂະພາບ ຄື:

1. ເຮັດໃຫ້ເສັ້ນເລືອດຝອຍ ແລະ ເສັ້ນເລືອດທົ່ວຮ່າງກາຍບໍ່ແຕກງ່າຍ ໂດຍສະເພາະປ້ອງກັນເສັ້ນເລືອດຕີບ ແລະ ແຕກໃນສະໝອງແລະຍັງຊ່ວຍໃຫ້ອາການຊໍ້າຂຽວດີໄວຂຶ້ນ, ວິຕາມິນຊີຈາກໝາກນາວ ມີປະສິດທິພາບຊ່ວຍໃຫ້ລະບົບເລືອດໄຫຼວຽນດີຂຶ້ນ ອະໄວຍະວະຕ່າງໆເຮັດວຽກໄດ້ດີ, ສະໝອງແຈ່ມໃສ, ຮ່າງກາຍສົດຊື່ນແລະຊ່ວຍບຳລຸງສຸຂະພາບໃນເວລາທີ່ອົດນອນ ແລະ ຂັບລົດທາງໄກ;

2. ຊ່ວຍເພີ່ມພູມຕ້ານທານໃຫ້ແກ່ຮ່າງກາຍແລະປ້ອງກັນພະຍາດທີ່ເກີດຈາກເຊື້ອໄວຣັສເຊັ່ນ: ເປັນຫວັດ, ເປັນໄອ ແລະ ເຈັບຄໍ ເຊິ່ງພະຍາດເຫຼົ່ານີ້ເກີດຂຶ້ນກັບຄົນທີ່ມີພູມຕ້ານທານຕໍ່າ;

3. ຊ່ວຍຊ້ອມແຊມ ແລະ ບຳລຸງເນື້ອເຍື່ອຕ່າງໆ ເນື່ອງຈາກວ່າມີໂປຣຕີນຈາກຖົ່ວເຫຼືອງ ແລະ ໝາກນາວ ເມື່ອລວມກັນແລ້ວ ເຮັດໃຫ້ເກີດຄວາມສົມດູນຂອງກົດ, ເຮັດໃຫ້ຮ່າງກາຍຍ່ອຍແລະດູດຊຶມໄດ້ງ່າຍ; ເຮັດໃຫ້ບາດທຸກຊະນິດຫາຍດີໄວຂຶ້ນ, ຮາກຜົມແຂງແຮງ ແລະ ຊ່ວຍຫຼຸດອາການຜົມຫລົ່ນ;

4. ສຸຂະພາບດີຂຶ້ນ ໂດຍສະເພາະສະມັດທະພາບທາງເພດ;

5. ຊ່ວຍຕ້ານອະນຸມູນອິດສະຫຼະ ເພາະມີວິຕາມິນຊີ ແລະ ສານໄອໂຊຟາເວີນອຍໃນນໍ້ານົມຖົ່ວເຫຼືອງ ຖ້າດື່ມເປັນປະຈຳຈະເຮັດໃຫ້ຮ່າງກາຍແຂງແຮງ ແລະ ປ້ອງກັນການເກີດພະຍາດມະເຮັງ.

ການກິນອາຫານພຽງຢ່າງດຽວ ອາດບໍ່ພຽງພໍກັບຄວາມຕ້ອງການຂອງຮ່າງກາຍ ສະນັ້ນ, ຄວນກິນອາຫານໃຫ້ຄົບ 5 ໝູ່, ອອກກຳລັງກາຍຢ່າງສະໝໍ່າສະເໝີ, ພັກຜ່ອນໃຫ້ພຽງພໍ ແລະ ເຮັດຈິດໃຈໃຫ້ສະຫງົບ, ບໍ່ຕຶງຄຽດ ພຽງເທົ່ານີ້ທ່ານ ກໍຈະຫ່າງໄກພະຍາດຕ່າງໆໄດ້ເຊັ່ນກັນ.

**ຂໍ້ມູນຈາກ:**
**www.laopost.com**




# ຄວນມອບວຽກແນວໃດ

**# ຫຼານເຈົ້ານ້ອຍ**

✻ ວຽກງານຕຳແໜ່ງຕັ້ງ    ຍໍຍື່ນຍັງຄົນ
ບໍ່ໄດ້ຄຳນຶງເຖິງ    ວ່າໃຜທຳໄດ້
ໂງ່ງົມໂຈມເອົາໃຫ້    ຕາມໃຈຄົນແຕ່ງ
ແບ່ງງານບໍ່ເບິ່ງເບື້ອງ    ຄວາມຮູ້ທີ່ມີ

✻ ຄົນທີ່ຖືກແຕ່ງຕັ້ງ    ຊົມຊື່ນຍິນດີ
ຮີຮາຫຼົງໄຫຼນຳ    ວຽກງານຕົນໄດ້
ດັ່ງປີ່ງທັງຂຶງກ້າມ    ແຂນໂຂງວາງມາດ
ສະຫຼອງປະກາດໃຫ້    ຄົນຮູ້ທົ່ວແດນ

✻ ຕົວຈິງເຮັດບໍ່ໄດ້    ຕາມທີ່ຕົນຫວັງ
ນັ່ງນອນແນນຳງານ    ຜ່ານໄປຫຼາຍມື້
ອັນທີ່ຮີຮາໄດ້    ການງານສູງສິ່ງ
ບໍ່ໄດ້ປົ່ງບອກໄດ້    ໂຕນັ້ນເກັ່ງຈິງ

✻ ຄົນມອບງານຈຶ່ງຕ້ອງ    ຕອງໄຕ່ດີໆ
ມອບງານຄວນແລຫຼຽວ    ເບິ່ງໄປຫຼາຍດ້ານ
ຄວາມໂອຫານວານເວົ້າ    ຊູເດົາເອງວ່າເຂົາເກັ່ງ
ຄວນເລັ່ງແລເບິ່ງເບື້ອງ    ງານແທ້ທີ່ເພິ່ນທຳ

✻ ຄວນປຶກສາເພິ່ນຜູ້    ຫຼຽວລໍ່າແລເຫັນ
ວ່າວຽກງານຄວນຍໍ    ຍື່ນໃຜກັນແທ້
ຢ່າໄດ້ເຫັນສາຍເສັ້ນ    ເອັນເຄືອຄະນາຍາດ
ຄວາມສາມາດບໍ່ໃຫ້    ມອບວຽກເຮັດບໍ່ໄດ້    ມັນກໍໄຮ້ຄ່າຄຸນ    ທ່ານເອີຍ!



## ລັກຊາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽນທ້ຽນ**

✻ ຜ່ານພົ້ນໄປ ສຳລັບວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນ ບັນຍາກາດພືດຟື້ນຄືນປ່າທົ່ວສັງຄົມ ປຸກລະດົມສາມັກຄີ ປູກແນວພັນໄມ້ ປູກໃສ່ທົ່ວລະບີພື້ນ ຄືນຄວາມຊຸ່ມຊື່ນ ອີກບໍ່ນານຄົງພິກຟື້ນ ຜືນພະນາປ່າກວ້າງ ຂຽວກະຈີໄດ້ດັ່ງເດີມ **ທ່ານເອີຍ!**

✻ ຕາມຂ່າວແຈ້ງຄະແຫຼງເປັນທາງການ ວັນທີ 8 ມິຖຸນາໄດ້ມີພິທີເປີດນຳໃຊ້ແຫຼ່ງທ່ອງທ່ຽວ ຖໍ້າຝາມີ ເຊິ່ງເປັນມໍລະດົກທາງບູຮານວິທະຍາ ແລະ ສິລະປະຖໍ້າ ຢູ່ບ້ານຄູນເງິນ ເມືອງຄູນຄໍາ ແຂວງຄໍາມ່ວນ **ລັກເດ!** ຂໍຊວນພີ່ນ້ອງ ທ່ຽວທ່ອງປະສົບການ ຜ່ານລາຍສິລະປະ ເພີ່ນຂີດວາງຂຽນແຕ້ມ ມີສັນຍະລັກວາງຊີ້ ຮົ່ງຮູບມືນ້ອຍທັງໃຫຍ່ ວາງລຽນລາຍເອກອ້າງ ບູຮານສ້າງເລົ່າເລື່ອງລາວ **ນັ້ນບາ!**

## ຊວນຍິ້ມ

# ພົ້ງລຶ້ງ

### ເລື່ອງ: ມົດງ່າມອິເສດ

ເຫດເກີດທີ່ສວນສັດແຫ່ງໜຶ່ງ, ເມື່ອມົດບໍ່ພໍໃຈທີ່ຊ້າງຢຽບຮັງຂອງພວກມັນ ຈຶ່ງພ້ອມກັນຫຸ້ມກັດໂຕຊ້າງ, ຊ້າງກະດຽມຄືງເລີຍສັ່ນຂົບ ພົບໆ! ພົບໆ! ມົດພາກັນຕົກລະ, ຍັງເຫຼືອແຕ່ມົດພຽງໂຕດຽວທີ່ຈັບຢູ່ຄໍຊ້າງ, ມົດໂຕອື່ນເຫັນຄືແນວນັ້ນ ກໍພາກັນຮ້ອງໃສ່ວ່າ: ເອົາເລີຍ! ເອົາເລີຍ! ບີບຄໍມັນຕາຍໂລດ!!!



## ສຸພາສິດ-ຄະຕິເຕືອນໃຈ

*#ດອກຫຍ້າ*

"ໜັກຢ່າເຊົາ    ເບົາຢ່າແລ່ນ"

ລັດຖະສະພາຕ່າງປະເທດ

# Bolivia ປະກາດໃຊ້ກົດໝາຍສະຖານະການສຸກເສີນ

(Xinhua) - ປະທານາທິບໍດີ ໂຣດຣິໂກ ປາຊ (Rodrigo Paz) ແຫ່ງ ລັດພະຫຸຊາດໂບລີວີ ໄດ້ປະກາດໃຊ້ກົດໝາຍສະຖານະການສຸກເສີນ ເມື່ອວັນຈັນທີ 8 ມິຖຸນານີ້.

ກົດໝາຍສະບັບສ້າງໃໝ່ ອະນຸຍາດໃຫ້ປະທານາທິບໍດີປະກາດສະຖານະການສຸກເສີນ ຜ່ານລັດຖະດຳລັດ ໃນສະຖານະການທີ່ກ່ຽວຂ້ອງກັບໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງຂອງລັດ, ໄພຂົ່ມຂູ່ຈາກພາຍນອກ, ຄວາມບໍ່ສະຫງົບພາຍໃນ ຫຼື ໄພພິບັດທາງທຳມະຊາດ; ລັດຖະດຳລັດດັ່ງກ່າວ ຈະຕ້ອງສົ່ງໄປຍັງສະພານິຕິບັນຍັດແຫ່ງຊາດ, ເຊິ່ງມີເວລາ 72 ຊົ່ວໂມງເພື່ອພິຈາລະນາ.

ປາຊ ກ່າວທີ່ສຳນັກງານໃຫຍ່ຂອງລັດຖະບານວ່າ ກົດໝາຍນີ້ ມີຈຸດປະສົງເພື່ອປົກປ້ອງປະຊາກອນສ່ວນໃຫຍ່ຂອງໂບລີວີ, ປົກປ້ອງຄວາມເປັນລະບຽບຮຽບຮ້ອຍຕາມລັດຖະທຳມະນູນ ແລະ ຟື້ນຟູເສດຖະກິດໃຫ້ກັບຄືນສູ່ສະພາບປົກກະຕິ.

ກົດໝາຍ 27 ມາດຕານີ້ ຄວບຄຸມສະຖານະການສຸກເສີນພາຍໃຕ້ລັດຖະທຳມະນູນ, ຮັບປະກັນສິດທິຂັ້ນພື້ນຖານໃນລະຫວ່າງການຈັດຕັ້ງປະຕິບັດ ແລະ ກຳນົດບົດບາດຂອງຕຳຫຼວດ, ທະຫານ ແລະ ໄອຍະການ.

ປາຊ ກ່າວວ່າ ມາດຕະການນີ້ ໄດ້ຮັບການສະໜັບສະໜູນຈາກສະຖາບັນ ແລະ ໄດ້ຮັບການອະນຸມັດຈາກສຽງສ່ວນຫຼາຍໃນສະພານິຕິບັນຍັດແຫ່ງຊາດ.



# ອິນໂດເນເຊຍ ອອກກົດໝາຍອະນຸຍາດໃຫ້ຕຳຫຼວດທີ່ຍັງປະຈຳການ ດຳລົງຕຳແໜ່ງໃນລັດຖະບານພົນລະເຮືອນ



(REUTERS) - ວັນອັງຄານທີ 9 ມິຖຸນານີ້, ສະພາປຶກສາປະຊາຊົນ (People's Consultative Assembly) ຫຼື ລັດຖະສະພາອິນໂດເນເຊຍ ໄດ້ຜ່ານການປັບປຸງກົດໝາຍຕຳຫຼວດແຫ່ງຊາດ ເຊິ່ງຈະອະນຸຍາດໃຫ້ຕຳຫຼວດທີ່ຍັງປະຈຳການ ສາມາດດຳລົງຕຳແໜ່ງໃນລັດຖະບານພົນລະເຮືອນ; ການປັບປຸງນີ້ ມີຂຶ້ນໜຶ່ງປີຫຼັງຈາກລັດຖະສະພາໄດ້ປັບປຸງກົດໝາຍການທະຫານ ເຊິ່ງໄດ້ຈັດສັນຕຳແໜ່ງພົນລະເຮືອນໃຫ້ທະຫານຫຼາຍຂຶ້ນ.

ພາຍໃຕ້ກົດໝາຍໃໝ່, ອະນຸຍາດໃຫ້ຕຳຫຼວດທີ່ຍັງປະຈຳການ ບໍ່ຈຳເປັນຕ້ອງລາອອກກ່ອນໄດ້ຮັບການແຕ່ງຕັ້ງໃຫ້ດຳລົງຕຳແໜ່ງໃນອົງການຂອງລັດ ຫຼື ກະຊວງອື່ນໆ ນອກເໜືອຈາກສຳນັກງານຕຳຫຼວດແຫ່ງຊາດ ລວມທັງຕຳແໜ່ງພົນລະເຮືອນ, ຕາບໃດທີ່ຕຳແໜ່ງເຫຼົ່ານັ້ນ ກ່ຽວຂ້ອງກັບວຽກງານ ແລະ ໜ້າທີ່ຂອງຕຳຫຼວດ; ຕຳແໜ່ງເຫຼົ່ານັ້ນ ໄດ້ແກ່ຕຳແໜ່ງທີ່ກ່ຽວຂ້ອງກັບຄວາມໝັ້ນຄົງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງລັດ, ການບັງຄັບໃຊ້ກົດໝາຍ, ການປົກປ້ອງ, ການດູແລ ແລະ ການບໍລິ ການສາທາລະນະ ໃນກະຊວງ ຫຼື ອົງການຂອງລັດຖະບານ. ນອກຈາກນັ້ນ, ຕຳຫຼວດທີ່ຍັງປະຈຳການ ຍັງສາມາດດຳລົງຕຳແໜ່ງຢູ່ນອກອົງກອນຂອງຕົນເອງໄດ້ ຕາມການຮ້ອງຂໍຈາກປະທານາທິບໍດີ ທັງໃນກະຊວງ ຫຼື ອົງການຂອງລັດ ຕາບໃດທີ່ຍັງຕ້ອງການຄວາມຊ່ຽວຊານຂອງພວກເຂົາ; ຂະນະດຽວກັນ, ຍັງຂະຫຍາຍອາຍຸການບຳນານພາກບັງຄັບສຳລັບຕຳຫຼວດ ລວມທັງຜູ້ບັນຊາການຕຳຫຼວດແຫ່ງຊາດອອກໄປອີກໜຶ່ງປີ.

# ພັກລັດຖະບານ Finland ສະໜັບສະໜູນການປົກປ້ອງສິດເອົາລູກອອກໃນລັດຖະທຳມະນູນ



(Xinhua)-ວັນອາທິດທີ 7 ມິຖຸນານີ້, ພັກພັນທະມິດແຫ່ງຊາດ (National Coalition Party - NCP) ເຊິ່ງເປັນພັກລັດຖະບານຂອງແຟງລັງ ໄດ້ລົງຄະແນນສຽງສະໜັບສະໜູນຂໍ້ສະເໜີທີ່ຈະເພີ່ມສິດການເອົາ ລູກອອກ ຫຼື ແທ້ງລູກ (abortion) ເຂົ້າໃນລັດຖະທຳມະນູນ, ຫຼັງຈາກການລົງມະຕິໃນກອງປະຊຸມໃຫຍ່ຂອງພັກ; ຂໍ້ລິເລີ່ມນີ້ ສະເໜີໂດຍສະມາຄົມແມ່ຍິງຂອງ NCP, ໂດຍຮຽກຮ້ອງໃຫ້ຄະນະກຳມະການບໍລິຫານພັກເຮັດວຽກເພື່ອເພີ່ມສິດການເອົາລູກອອກເຂົ້າໃນລັດຖະທຳມະນູນ ແລະ ຮຽກຮ້ອງໃຫ້ລັດຖະມົນຕີ ແລະ ກຸ່ມລັດຖະສະພາຂອງພັກ ສົ່ງເສີມການເຄື່ອນໄຫວດັ່ງກ່າວ.

ການຕັດສິນໃຈນີ້ ເກີດຂຶ້ນສອງອາທິດຫຼັງຈາກພັກສັງຄົມປະຊາທິປະໄຕ (Social Democratic Party - SDP) ເຊິ່ງເປັນພັກຝ່າຍຄ້ານ ໄດ້ລົງມະຕິຄ້າຍຄືກັນໃນກອງປະຊຸມໃຫຍ່ຂອງພັກ, SDP ໄດ້ເພີ່ມຂໍ້ຄວາມໃນໂຄງການການເມືອງຂອງພັກວ່າ ສິດການເອົາລູກອອກ ຕ້ອງໄດ້ຮັບການປົກປ້ອງ ແລະ ເປົ້າໝາຍຄືເພີ່ມສິດການເອົາ ລູກອອກໄວ້ໃນລັດຖະທຳມະນູນໃນອະນາຄົດ.



## ທ່ານ ໄຊສົມພອນ...

(ຕໍ່ຈາກໜ້າ 1)

ບັນຊາການ ປກສ ນວ ແລະ ນາຍຕຳຫຼວດນຳພາ-ບັນຊາຫຼັກແຫຼ່ງອ້ອມຂ້າງກະຊວງ ປກສ ເຂົ້າຮ່ວມຢ່າງພ້ອມພຽງ.

ໂອກາດນີ້, ທ່ານ ໄຊສົມພອນ ພົມວິຫານ ໄດ້ຕາງໜ້າໃຫ້ກົມການເມືອງສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ ສະແດງຄວາມຢື້ຢາມຖາມຂ່າວອັນອົບອຸ່ນ ແລະ ສະແດງຄວາມຍ້ອງຍໍຊົມເຊີຍຢ່າງສຸດອົກສຸດໃຈ ຕໍ່ບັນດາຜົນງານ ກໍຄືຜົນສຳເລັດທີ່ກຳລັງປ້ອງກັນຄວາມສະຫງົບປະຊາຊົນຍາດມາໄດ້ ໃນການຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບປອດໄພ ແລະ ເປັນເຈົ້າການໃນການມ້າງຄະດີຢາເສບຕິດ, ສະກັດກັ້ນອາຊະຍາກຳຂ້າມຊາດ ແລະ ບັນຫາສະແກມເມີໄດ້ຢ່າງທັນການ. ພ້ອມກັນນັ້ນ, ໄດ້ເນັ້ນໜັກໃຫ້ຄະນະພັກ-ຄະນະບັນຊາທຸກຂັ້ນເອົາໃຈໃສ່ຕື່ມບາງດ້ານ ເປັນຕົ້ນແມ່ນ: ເພີ່ມທະວີບົດບາດການນຳພາຂອງພັກ ເຂົ້າໃນການເຄື່ອນໄຫວວຽກງານ ປກສ ໂດຍສະເພາະການດຳເນີນຄະດີອາຍາ, ການສືບສວນ-ສອບສວນ ໃຫ້ຮັບປະກັນຄວາມໂປ່ງໃສ ແລະ ຍຸຕິທຳຕາມກົດໝາຍຢ່າງເຂັ້ມງວດ; ເອົາໃຈໃສ່ສຶກສາອົບຮົມ, ຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດຂອງນາຍ ແລະ ພົນຕຳຫຼວດໃຫ້ເປັນຜູ້ຈົງຮັກພັກດີ, ຕ້ານ ແລະ ສະກັດກັ້ນພະຍາດອາດຍາສິດ; ເປັນແບບຢ່າງທີ່ດີໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ ກໍຄືກົດໝາຍ; ຍົກສູງສະຕິລະວັງຕົວ, ຝຶກຝົນດ້ານສິນລະປະຍຸດ, ຍຸດທະວິທີ ແລະ ເຕັກນິກທີ່ທັນສະໄໝ ເພື່ອໂຕ້ຕອບອາຊະຍາກຳທາງເອເລັກໂຕຣນິກ ແລະ ກົນອຸບາຍມ້າງເພຂອງອິດທິກຳລັງປໍລະປັກ; ສືບຕໍ່ຫັນກຳລັງລົງກໍ່ສ້າງຮາກຖານການເມືອງໃຫ້ແຂງແຮງ; ສ້າງຄວາມເຂັ້ມແຂງທາງດ້ານການສ້າງພະລາທິການກັບທີ່ເພື່ອດຳເນີນການປະຢັດມັດທະຍັດ; ສືບຕໍ່ຮັກສາມູນເຊື້ອອັນດີງາມໃນການຊ່ວຍເຫຼືອປະຊາຊົນ ເພື່ອສ້າງຄວາມໄວ້ເນື້ອເຊື່ອໃຈ ແລະ ເປັນທີ່ເພິ່ງຂອງປະຊາຊົນຢ່າງແທ້ຈິງ; ພ້ອມທັງໃຫ້ຄວາມສຳຄັນກັບການພົວພັນຮ່ວມມືທີ່ມີມູນເຊື້ອກັບກຳລັງປ້ອງກັນຄວາມສະຫງົບຂອງປະເທດເພື່ອນມິດຍຸດທະສາດ ຢ່າງມີການເລືອກເຟັ້ນ.

**(ອານຸສອນ ພຸມມີທອນ)**



## ປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນພຸດທີ 10 ມິຖຸນານີ້, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ແລະ ຄະນະສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ປະຈຳເຂດເລືອກຕັ້ງເມືອງສີໂຄດຕະບອງ ນຳໂດຍທ່ານ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ທ່ານ ອາດສະພັງທອງ ສີພັນດອນ ກຳມະການສູນກາງພັກ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ພ້ອມດ້ວຍຄະນະຕິດຕາມ ໄດ້ເຄື່ອນໄຫວພົບປະແລະເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ V ຢູ່ສະໂມສອນເມືອງສີໂຄດຕະບອງ ໂດຍການຕ້ອນຮັບຂອງທ່ານບຸນມີ ໄຊຍະວົງ ຮອງເລຂາພັກເມືອງ, ປະທານຄະນະກຳມະການປົກຄອງເມືອງ, ບັນດາການນຳຂັ້ນສູງ, ຫົວໜ້າຫ້ອງການອ້ອມຂ້າງ, ພະນັກງານຫຼັກແຫຼ່ງ, ປະທານຄະນະກຳມະການປົກຄອງຕາແສງ, ເລຂາພັກບ້ານ, ອຳນາດການປົກຄອງບ້ານ, ຕາງໜ້າປະຊາຊົນແຕ່ລະບ້ານພາຍໃນເມືອງສີໂຄດຕະບອງ ເຂົ້າຮ່ວມຢ່າງພ້ອມພຽງ; ໃນການເຄື່ອນໄຫວພົບປະ, ປະທານຄະນະກຳມະການປົກຄອງເມືອງສີໂຄດຕະບອງ ໄດ້ລາຍງານສະພາບເສດຖະກິດ-ສັງຄົມຂອງເມືອງໂດຍຫຍໍ້, ຄວາມເສຍຫາຍຈາກໄພພິບັດທາງທຳມະຊາດ; ຈາກນັ້ນ, ບັນດາທ່ານ ສສຊ-ສສນວ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X ແລະ ສປນວ ຊຸດທີ V.

ໂອກາດນີ້, ທ່ານ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄວາມເອົາໃຈໃສ່ຂອງຄະນະພັກ, ອຳນາດການປົກຄອງເມືອງກໍຄືພະນັກງານ, ທະຫານ-ຕຳຫຼວດ ແລະປະຊາຊົນຊາວເມືອງສີໂຄດຕະບອງທຸກທົ່ວໜ້າ ທີ່ໄດ້ພ້ອມພຽງເປັນຈິດໜຶ່ງໃຈດຽວ ເຮັດສຳເລັດໜ້າທີ່ວຽກງານອັນສຳຄັນ, ພ້ອມກັນສ້າງສາເມືອງໃຫ້ມີບາດກ້າວຫັນປ່ຽນຢ່າງຕັ້ງໜ້າ, ຊີວິດການເປັນຢູ່ຂອງພໍ່ແມ່ປະຊາຊົນໄດ້ຮັບການປັບປຸງດີຂຶ້ນເປັນລຳດັບ. ພ້ອມກັນນັ້ນ, ທ່ານຍັງເນັ້ນໜັກໃຫ້ເອົາໃຈໃສ່ເພີ່ມທະວີການນຳພາ-ຊີ້ນຳທາງດ້ານແນວຄິດການເມືອງ ທັງຊອກທ່າແຮ່ງການຂຸດຄົ້ນແຫຼ່ງລາຍຮັບ ແລະ ຊຸກຍູ້ສົ່ງເສີມປະຊາຊົນທຳການການຜະລິດ ເພື່ອສ້າງຖານລາຍຮັບໃໝ່, ການແກ້ໄຂບັນຫາຮົ່ວໄຫຼຂອງງົບປະມານ, ບັນຫາສິ່ງເສບຕິດ, ຂີ້ລັກງັດແງະ, ສະແກມເມີແລະອື່ນໆ; ເພີ່ມທະວີການນຳພາຮອບດ້ານຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ມີຄວາມໜັກແໜ້ນ; ຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນທຳການຜະລິດກະສິກຳ, ການລ້ຽງສັດເປັນສິນຄ້າ ມີມາດຕະຖານ, ມີຄຸນນະພາບ ເພື່ອສະໜອງໃຫ້ແກ່ບັນດາໂຮງແຮມ, ຮ້ານອາຫານ, ຕະຫຼາດຕ່າງໆ ໃນນະຄອນຫຼວງ; ສ້າງ ແລະ ຂະຫຍາຍຮູບແບບເສດຖະກິດລວມໝູ່ຂອງປະຊາຊົນ ໃຫ້ກາຍເປັນຖານເສດຖະກິດອັນໝັ້ນຄົງແລະໜັກແໜ້ນ;ພັດທະນາຊັບພະຍາກອນມະນຸດໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການ ແລະ ສາມາດຕອບສະໜອງແກ່ການສ້າງສາພັດທະນາພາຍໃນ; ສຶກສາອົບຮົມໃຫ້ປະຊາຊົນຮັກສາມູນເຊື້ອຄວາມສາມັກຄີປອງດອງ, ນ້ຳໃຈຮັກຊາດ ແລະ ເສຍສະຫຼະເພື່ອຜົນປະໂຫຍດສ່ວນລວມ;ສ້າງສະຕິເຄົາລົບກົດໝາຍ, ການປະຕິບັດພັນທະຂອງປະຊາຊົນ; ເພີ່ມທະວີການເຝິກອົບຮົມສີມືແຮງງານໃຫ້ມີຄຸນນະພາບ, ປະຊາຊົນມີວຽກເຮັດງານທຳ, ມີລາຍຮັບ ແລະ ມີຊີວິດການເປັນຢູ່ທີ່ໝັ້ນຄົງດີຂຶ້ນ; ປັບປຸງໂຮງໝໍເມືອງ, ໂຮງໝໍນ້ອຍ ໃຫ້ພໍ່ແມ່ປະຊາຊົນສາມາດເຂົ້າເຖິງການປິ່ນປົວຢ່າງກວ້າງຂວາງ, ສະດວກ ແລະ ມີປະສິດທິພາບ; ເພີ່ມຄວາມສາມາດໃນການເຝົ້າລະວັງຕິດຕາມ, ຊອກຄົ້ນຫາ ແລະ ໂຕ້ຕອບກໍລະນີພະຍາດລະບາດໃຫ້ໄດ້ໄວ;ເອົາໃຈໃສ່ການສ້າງ ແລະ ສ້ອມແປງໂຮງຮຽນ.

ທ່ານປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ພົບປະ, ຢ້ຽມຢາມປະຊາຊົນຢູ່ວັດໂພທາຣາມ ບ້ານໂພນສົມບູນ ແລະ ມອບເຄື່ອງອຸໂພກ-ບໍລິໂພກ ແລະ ອຸປະກອນທີ່ຈຳເປັນ ໃຫ້ແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດພາຍຸໝາກເຫັບ ທີ່ພັດຖະຫຼົ່ມໃນໄລຍະຜ່ານມາ ເພື່ອຊ່ວຍເຫຼືອຟື້ນຟູຊີວິດການເປັນຢູ່ໃຫ້ກັບຄືນສູ່ສະພາບປົກກະຕິໂດຍໄວ ພ້ອມທັງປຸກລະດົມຈິດໃຈໃຫ້ປະຊາຊົນມີຄວາມອຸ່ນໃຈ ແລະ ມີສະຕິເຂັ້ມແຂງໃນການສ້າງສາຄອບຄົວຄືນໃໝ່; ສະແດງຄວາມເຫັນໃຈແລະຢ້ຽມຢາມຖາມຂ່າວຄວາມທຸກສຸກຂອງປະຊາຊົນແຕ່ລະຄອບຄົວຢ່າງເປັນກັນເອງພ້ອມທັງຍ້ອງຍໍຊົມເຊີຍຄວາມສາມັກຄີຮັກແພງຂອງອຳນາດການປົກຄອງ ແລະ ປະຊາຊົນພາຍໃນບ້ານ ທີ່ໄດ້ຊ່ວຍເຫຼືອເບິ່ງແຍງກັນໃນຍາມເກີດເຫດສຸກເສີນ. ທ່ານໄດ້ຊີ້ນຳໃຫ້ອຳນາດການປົກຄອງທ້ອງຖິ່ນ ເລັ່ງສົມທົບກັບຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ກຳລັງປກຊ-ປກສ ແລະ ພາກສ່ວນກ່ຽວຂ້ອງ ດຳເນີນການສ້ອມແປງເຮືອນຊານ ແລະ ຟື້ນຟູພື້ນຖານໂຄງລ່າງໃຫ້ທັນການ.



**(ນາງ ອາລິນ ສຸພົມມະປະດິດ)**




***#ບ່າວກະບື***

ແມ່ນຫຍັງ ເມື່ອສະອາດເປັນສີດຳ ແຕ່ເມື່ອເປື້ອນພັດເປັນສີຂາວ?

"ກະດານດຳ"

***#BAOKBU***

What's black when it's clean and white when it's dirty?

"A blackboard"



## ທ່ານ ນາງ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນສຸກທີ 12 ມິຖຸນາ 2026, ທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງທ່ານ ຈອງ ຢອງ ຊູ (Jung Yung Soo) ເອກອັກຄະລັດຖະທູດແຫ່ງ ສາທາລະນະລັດ ເກົາຫຼີ ປະຈຳ ສປປລາວ ເນື່ອງໃນໂອກາດທີ່ທ່ານເອກອັກຄະລັດຖະທູດ ສຳເລັດການປະຕິບັດໜ້າທີ່ການທູດຢູ່ ສປປລາວ.

ໂອກາດນີ້, ທ່ານຮອງປະທານສະພາແຫ່ງຊາດ ໄດ້ກ່າວສະແດງຄວາມຊົມເຊີຍ, ຕີລາຄາສູງ ແລະ ອວຍພອນທ່ານເອກອັກຄະລັດຖະທູດທີ່ໄດ້ຫ້າວຫັນເຄື່ອນໄຫວການທູດຂອງຕົນຢູ່ ສປປລາວ ໂດຍມີຜົນສຳເລັດຫຼາຍດ້ານ, ເປັນຜູ້ທີ່ໄດ້ຊຸກຍູ້ການພົວພັນຮ່ວມມືດ້ານຕ່າງໆ ລະຫວ່າງ ສ.ເກົາຫຼີ ແລະ ສປປລາວ ຕະຫຼອດໄລຍະເກືອບ 4 ປີທີ່ປະຕິບັດໜ້າທີ່ຢູ່ສປປລາວ, ອັນໄດ້ເຮັດໃຫ້ການພົວພັນລະຫວ່າງລັດຖະບານສອງປະເທດ ກໍຄືປະຊາຊົນສອງຊາດ ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ ເຊັ່ນ: ການແລກປ່ຽນຄະນະຜູ້ແທນຂັ້ນສູງ, ການພົວພັນດ້ານເສດຖະກິດ-ການຄ້າ ແລະ ການລົງທຶນ ເຊິ່ງ ສ.ເກົາຫຼີ ກໍເປັນປະເທດທີ່ຢືນຢູ່ປະເທດອັນດັບຕົ້ນໃນຈຳນວນປະເທດທີ່ມາລົງທຶນຢູ່ ສປປລາວ; ນອກນັ້ນ, ສອງປະເທດຍັງມີການພົວພັນດ້ານແຮງງານ, ທ່ອງທ່ຽວ, ການພັດທະນາຊົນນະບົດ ແລະ ອື່ນໆ. ທ່ານ ນາງ ສູນທອນ ໄຊຍະຈັກ ຍັງໄດ້ອວຍພອນໃຫ້ທ່ານທູດຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນໜ້າທີ່ວຽກງານອັນໃໝ່,ສືບຕໍ່ຊຸກຍູ້ການພົວພັນຮ່ວມມືຂອງສອງປະເທດໃນຕໍ່ໜ້າ.

ທ່ານເອກອັກຄະລັດຖະທູດສ.ເກົາຫຼີ ໄດ້ສະແດງຄວາມຂອບໃຈຕໍ່ການນຳຂັ້ນຕ່າງໆຂອງ ສປປລາວ ທີ່ໄດ້ໃຫ້ການຮ່ວມມືເປັນຢ່າງດີ, ສະໜັບສະໜູນການເຄື່ອນໄຫວຂອງສະຖານທູດ ສ.ເກົາຫຼີ ຕະຫຼອດໄລຍະຜ່ານມາ; ທ່ານຍັງໄດ້ຕີລາຄາການພົວພັນລະຫວ່າງສອງອົງການນິຕິບັນຍັດຂອງ 2 ປະເທດ ໂດຍໄດ້ມີການແລກປ່ຽນຜູ້ແທນສອງອົງການນິຕິບັນຍັດຂອງ 2 ປະເທດ. ນອກນັ້ນ, ທ່ານທູດຍັງໄດ້ກ່າວສະແດງຄວາມຊົມເຊີຍຕໍ່ການແຕ່ງຕັ້ງຄະນະມິດຕະພາບລັດຖະສະພາ ລາວ-ເກົາຫຼີ ແລະ ຍັງໄດ້ກ່າວສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາແຫ່ງຊາດ ທີ່ໄດ້ໃຫ້ການຕ້ອນຮັບຢ່າງອົບອຸ່ນ, ພ້ອມທັງອວຍພອນໃຫ້ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ແລະ ການເປັນຄູ່ຮ່ວມມືຮອບດ້ານ ລະຫວ່າງ ສ.ເກົາຫຼີ ແລະ ສປປລາວ ຈົ່ງສືບຕໍ່ໄດ້ຮັບການຮັດແໜ້ນ ແລະ ຂະຫຍາຍຕົວຍິ່ງໆຂຶ້ນໄປ.

**ຄະນະຂັນນາທິການ**

ທ່ານ ບໍ ທານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງຂັນນາທິການ**

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**

ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**

ທ່ານ ສອນສັກ ວັນວິໄຊ